ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

❀❀❀❀❀❀❀❀❀❀

ເລກທີ່......03...../.ສ.ຂ.ຂ.

# <u>ສັນຍາການຊື້-ຂາຍ ດິນ</u>

## <u>ລະຫວ່າງ:</u>

**ທ່ານ ນາງ ພິດສະໄໝ ຈັນທະວົງ - ທ້າວ ຄຳຟອງ ຈັນທະວົງ** ປະຈຸບັນຢູ່ບ້ານ ຈູມຄ້ອງ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ. ເບີຕິດຕໍ່: 77776304 ຊຶ່ງເປັນຜູ້ຂາຍດິນ ເອີ້ນວ່າ:(ຝ່າຍ ກ.) ໄດ້ຕົກລົງຂາຍດິນ ຈຳນວນ 1 ຕອນ.

ໃຫ້ກັບ

**ທ່ານ ນາງ ບຸນທັນ ລັກປະສິດ** ປະຈຸບັນ ຢູ່ບ້ານ ສັງຄະໂລກ ເບີໂທ:22136664, ປະຈຸບັນ ຢູ່ບ້ານ ສັງຄະໂລກ ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ ຊຶ່ງຮ່ວມກັນເປັນຜູ້ຊື້ດິນ ເອີ້ນວ່າ: (ຝ່າຍ ຂ.).

ທັງສອງຝ່າຍໄດ້ຕົກລົງເອກະພາບກັນ ເຊັນຂໍ້ຜູກພັນສັນຍາດຳເນີນການ ຊື້-ຂາຍ ດິນພາຍໃຕ້ເງື່ອນໄຂລະອຽດດັ່ງລຸ່ມນີ້:

## ພາກທີ່ I
## ວ່າດ້ວຍລະບຽບຫຼັກການລວມ

<u>ມາດຕາ 01:</u>ຫຼັກການ ຊື້-ຂາຍ

*ຂໍ້ 1.1 <u>ລາຍລະອຽດຂອງດິນ.</u>*

- ດິນ ມີເນື້ອທີ່ 372 ຕາແມັດ ແຜນທີ່ໃບຕາດິນລະຫັດ 06-001-0034 ຕາມສະໝຸດໃບຕາດິນເຫຼັ້ມທີ່ 03, ໃບທີ່ 125 ເລກທີ່ 425 ໂດຍອອກຊື່ ນາງ ພິດສະໄໝ ຈັນທະວົງ ແລະ ທ້າວ ຄຳຟອງ ຈັນທະວົງ .

*ຂໍ້ 1.2 <u>ດ້ານລາຄາ.</u>*

ມູນຄ່າຂອງການຊື້-ຂາຍ ດິນ 1 ຕອນນີ້ ແມ່ນ: 610.000 Bath (ຫົກແສນສິບພັນບາດ).

<u>ມາດຕາ 02:</u>ດ້ານການຊຳລະເງິນ

*ຂໍ້ 2.1 <u>ຮູບການຊຳລະ.</u>*

- ການຊຳລະເງິນແມ່ນຈ່າຍເປັນງວດ ແລະ ໂອນເຂົ້າບັນຊີຂອງ ທະນາຄານການຄ້າຕ່າງປະເທດລາວ

ທ່ານນາງ ພິດສະໄໝ ຈັນທະວົງ ທີ່ຢູ່ບ້ານ ຈູມຄ້ອງ ໝາຍເລກບັນຊີ: 050-5-12-02-00605 (ສະກຸນເງິນບາດ) ທີ່ມີການຮັບຮູ້ ແລະ ມີໃບການມອບໂອນ ຈາກທາງທະນາຄານເທົ່ານັ້ນ (ເຮັດບົດບັນທຶກການມອບຮັບເງິນແຕ່ລະຄັ້ງນຳພ້ອມ).

- ການຊຳລະແຕ່ລະງວດແມ່ນມອບ- ໂອນເປັນສະກຸນເງິນບາດເທົ່ານັ້ນເຖິງວ່າອັດຕາການແລກປ່ຽນຈະມີການປ່ຽນແປງກໍ່ຕາມ.

*<u>ຂໍ້ 2.2 ການບັດໝາຍຖອກເງິນ:</u>*

✦ງວດທີ1 ວັນທີ່ 18/01/2012 ຈ່າຍ 80% ຂອງມູນຄ່າທັງໝົດ ຕົກເປັນມູນຄ່າ: 500.000 ບາດ.

✦ງວດທີ2 ສ່ວນອີກ 20% ຂອງມູນຄ່າທີ່ຍັງເຫຼືອຕົກເປັນມູນຄ່າ: 110.000 ບາດ ແມ່ນຈ່າຍຕາມຫຼັງ, ພາຍຫຼັງທີ່ເຮັດ ໃບມອບ- ໂອນກຳມະສິດໃບຕາດິນ ໃຫ້ກັບ (ຝ່າຍ ຂ.) ສຳເລັດ.

<u>ມາດຕາ 03:</u> ການມອບ-ຮັບ

- ຂໍ້ 3.1 ຝ່າຍຜູ້ຂາຍ (ຝ່າຍ ກ.) ຍິນຍອມໃຫ້ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ສາມາດດັດ, ປັບແປງໜ້າດິນ, ປຸກສ້າງເຮືອນຕ່າງໆ ໄດ້ ນັບແຕ່ມື້ທີ່ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ໄດ້ຈ່າຍເງິນງວດທຳອິດຄົບຕາມຈຳນວນ 80% ສຳເລັດ.
- ຂໍ້ 3.2 ເລື່ອງການດຳເນີນແລ່ນເອກະສານການ ມອບ-ໂອນ ໃບຕາດິນໃຫ້ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ຢ່າງຄົບຖ້ວນ ແລະ ຄ່າໃຊ້ຈ່າຍໃນການມອບໂອນຕ່າງໆ ນັ້ນແມ່ນໃຫ້ ຝ່າຍຜູ້ຂາຍດິນ (ຝ່າຍ ກ.) ເປັນຜູ້ຈ່າຍໝົດ.
- ຂໍ້ 3.3 ການຊື້ຂາຍດິນຕ້ອງເຮັດໃບຢັ້ງຢືນຈາກອຳນາດການປົກຄອງ ແລະ ຜ່ານທະບຽນສານ ຢ່າງຄັກແນ່, ຫ້າມເຈົ້າຂອງດິນເອົາໃບຕາດິນດັ່ງກ່າວໄປມັດຈຳຄົນອື່ນເດັດຂາດ.

## ພາກທີ່ II
## ວ່າດ້ວຍມາດຕະການປະຕິບັດສັນຍາ

<u>ມາດຕາ 04:</u> ຖ້າຫາກ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ບໍ່ຈ່າຍເງິນຕາມກຳນົດທີ່ຕົກລົງໄວ້ນັ້ນໃນສັນຍາ ຝ່າຍຜູ້ຂາຍດິນ (ຝ່າຍ ກ.) ຕາມສັນຍາການຊື້-ຂາຍດິນ ທີ່ໄດ້ລະບຸໄວ້ຕາມ **ມາດຕາ 2 ຂໍ້ 2.2** ແລະ **ມາດຕາ 3 ຂໍ້ 3.2** ໃນສັນຍາສະບັບນີ້ ແມ່ນຈະຕ້ອງຍົກໃຫ້ ຝ່າຍຜູ້ຂາຍດິນ (ຝ່າຍ ກ.) ໂດຍປາສະຈາກການຮ້ອງຟ້ອງຄືນແຕ່ຢ່າງໃດ.

<u>ມາດຕາ 05:</u>ຫາກໃບຕາດິນດັ່ງກ່າວມີບັນຫາ ກັບບຸກຄົນທີ່ 3 ທາງຝ່າຍຊື້ຈະຕ້ອງໄດ້ປັບໃໝຜູ້ຂາຍສອງເທົ່າຕົວຂອງເງິນທີ່ໄດ້ຈ່າຍແລ້ວ ແລະ ດິນຕອນດັ່ງກ່າວ, ສິ່ງທີ່ປກສ້າງ ອື່ນໆ ນັ້ນແມ່ນມອບໃຫ້ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ເລີຍໂດຍປາສະຈາກການຮ້ອງຟ້ອງຄືນ (ກໍລະນີທີ່ ຝ່າຍຜູ້ຂາຍ (ຝ່າຍ ກ.) ໂອນໃບຕາດິນໃຫ້ກັບ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ບໍ່ໄດ້).

ມາດຕາ 06: ຫາກຝ່າຍໃດຝ່າຍໜຶ່ງຫາກບໍ່ປະຕິບັດຕາມສັນຍາທີ່ໄດ້ເຮັດຂຶ້ນນີ້ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ ວາງອອກທຸກປະການ.

ມາດຕາ 07: ຫ້າມຄູ່ສັນຍາ ຝ່າຍໃດໜຶ່ງປ່ຽນແປງ, ເພີ່ມເຕີມຂໍ້ຄວາມສັນຍາ ຫຼື ຍົກເລີກສັນຍາໂດຍບໍ່ໄດ້ຮັບຄວາມເຫັນດີຈາກອີກຝ່າຍໜຶ່ງ.

ມາດຕາ 08:ສັນຍາສະບັບນີ້ມີກຳນົດ 2 ເດືອນ ນັບແຕ່ວັນທີ່ 17/01/2012 ເຖິງວັນທີ່ 17/03/2012.

ມາດຕາ 09:ສັນຍາສະບັບນີ້ປະກອບມີ 2 ພາກ ແລະ 9ມາດຕາ, ເຮັດເປັນ 3ສະບັບ, ລວມມີ 3ໜ້າ, ທຸກສະບັບມີເນື້ອໃນ, ຂໍ້ຄວາມທັງໝົດກົງກັນໄດ້ອ່ານຄູ່ສັນຍາ ແລະ ພະຍານຟັງໂດຍຊ້ອງໜ້າອຳນາດການປົກຄອງບ້ານບ່ອນທີ່ດິນຕັ້ງຢູ່ໂດຍປາສະຈາກການບີບບັງຄັບ ແລະ ນາບຂູ່.

ດັ່ງນັ້ນ, ທັງສອງຝ່າຍຈຶ່ງໄດ້ພ້ອມກັນລົງລາຍເຊັນໄວ້ເພື່ອເປັນຫຼັກຖານ ສັນຍາສະບັບນີ້ມີຜົນສັກສິດນັບແຕ່ມື້ຄູ່ສັນຍາລົງລາຍເຊັນເປັນຕົ້ນໄປ.

**ຝ່າຍ ຂ. (ຜູ້ຊື້ດິນ)** | **ພະຍານ(ຝ່າຍຜູ້ຊື້)** | **ຝ່າຍ ກ. (ຜູ້ຂາຍດິນ)**

ບ.ບຸນໜີ

..................................... ສຸກສະຫັນ

..................................... ສົມສະໜຸກ

..................................... ບຸນ

ນ.ພິດສະຫວັນ

**ພະຍານ(ຝ່າຍຜູ້ຂາຍ)**

.....................................

.....................................

.....................................

ທີ່ບ້ານ.......ສັງຄະໂລກ.......ວັນທີ່.......16/01/2012

**ເຊັນ ແລະ ປະທັບຕາຈາກນາຍບ້ານ**

ນາຍບ້ານ ບ້ານ ວັດສັງຄະໂລກ ເມືອງ ຫຼວງພະບາງ

ຄຳພັນ ວົງສອນເພັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********

ແຂວງຫຼວງພະບາງ ເລກທີ່......03...../.ສຄລ..........

ເມືອງຫຼວງພະບາງ

ບ້ານສັງຄະໂລກ

# ໃບຢັ້ງຢືນການມອບກຳມະສິດທີ່ດິນ ແລະ ເຮືອນ

ນາຍບ້ານ....ພັນ ສັງຄະໂລກ...., ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ ໄດ້ຢັ້ງຢືນວ່າ ໃນວັນທີ່..23/01/2012..ໄດ້ມີທ່ານ..ນາງ ຜົດສະໄໝ ຈັນທະວົງ...ອາຍຸ.........., ສັນຊາດ..ລາວ.......ອາຊີບ..ຄ້າຂາຍ.. ປັດຈຸບັນບ້ານ.....ຈອມຄຳ..............ໜ່ວຍ..............ເມືອງ ຫຼວງພະບາງ ແຂວງ ຫຼວງພະບາງ (ເຊິ່ງເປັນເຈົ້າຂອງກຳມະສິດທີ່ດິນ-ເຮືອນ) ພ້ອມດ້ວຍພະຍານ 3 ທ່ານຄົບກະສຽນ ອາຍຸຄື:

1. ທ່ານ...ສົມສະໝຸດ..............ອາຍຸ..42....ປີ,ສັນຊາດ...ລາວ.....,ອາຊີບ.ພະນັກງານ,ບ້ານ.....ຄອຍ.....,
   ເມືອງ...ຫຼວງພະບາງ......., ແຂວງ...ຫຼວງພະບາງ...
2. ທ່ານ...ສຸກ ສະຫວັນ...........ອາຍຸ..58....ປີ,ສັນຊາດ..ລາວ.......,ອາຊີບ.ພະນັກງານ,ບ້ານ..ສັງຄະໂລກ,
   ເມືອງ..ຫຼວງພະບາງ........., ແຂວງ.....ຫຼວງພະບາງ.....
3. ທ່ານ...ນາງ ທຸມມາ.................ອາຍຸ..52....ປີ,ສັນຊາດ..ລາວ.......,ອາຊີບ..ຄ້າຂາຍ,ບ້ານ...ສາຍລົມ..,
   ເມືອງ...ຫຼວງພະບາງ......., ແຂວງ.....ຫຼວງພະບາງ......

ຂ້າພະເຈົ້າທ່ານ..ນາງ ຜົດສະໄໝ ຈັນທະວົງ........ຂໍມອບກຳມະສິດນຳໃຊ້ທີ່ດິນ-ເຮືອນ ຕາມໃບຕາດິນເລກທີ່.....425.....ລົງວັນທີ່..............ເນື້ອທີ່..372..ຕາແມັດ, ພ້ອມດ້ວຍເຮືອນເລກທີ່............ ບ້ານ.....ສັງຄະໂລກ.......ເມືອງ..ຫຼວງພະບາງ.....ແຂວງ...ຫຼວງພະບາງ.........ໃຫ້ເປັນກຳມະສິດຂອງທ່ານ..ນາງ ບຸນທັນ ລັກປະສິດ...ອາຍຸ.........ປີ, ສັນຊາດ...ລາວ........., ອາຊີບ...ແມ່ບ້ານ... ບ້ານ...ສັງຄະໂລກ......, ເມືອງ....ຫຼວງພະບາງ......, ແຂວງ.....ຫຼວງພະບາງ.........ນັບແຕ່ວັນທີ່..23/01/2012...ເປັນຕົ້ນໄປແມ່ນຕົກເປັນກຳມະສິດຂອງທ່ານ...ນາງ ບຸນທັນ ລັກປະສິດ.........

ໂດຍຖືກຕ້ອງຕາມກົດໝາຍ, ເຫດຜົນທີ່ມອບໃຫ້ທ່ານ........ທ.ບຸນທັນ ລັກປະສິດ..................ໄດ້ຊື້ຂາຍສິດນຳໃຊ້ທີ່ດິນ-ເຮືອນຕາມສັນຍາຊື້ຂາຍສິດນຳໃຊ້ທີ່ດິນຄົບຖ້ວນ.

ດັ່ງນັ້ນ, ຈຶ່ງໄດ້ເຮັດໜັງສືສະບັບນີ້ໄວ້ໃຫ້ຜູ້ກ່ຽວໄວ້ເປັນຫຼັກຖານ.

| ຜູ້ມອບສິດ | ຜູ້ຮັບສິດ |
|---|---|
| ນ. | ນ.ບຸນທັນ |

ພະຍານ

1..........................................

2..........................................

3..........................................

ທີ່..[illegible].......ວັນທີ່.......25/01/2012.........

ຢັ້ງຢືນ ນາຍບ້ານ

ນາຍບ້ານ ບ້ານ ...ລະໂຄ
ເມືອງ ຫຼວງພະບາງ

ຄຳພັນ ວົງສອນເພັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
❀❀❀❀❀❀❀❀❀

# ບົດບັນທຶກການມອບ-ຮັບເງິນ

ວັນທີ່ 18/01/2012 **ນາງ ບຸນທັນ ລັກປະສິດ** ປະຈຸບັນຢູ່ບ້ານສັງຄະໂລກ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ. ເບີຕິດຕໍ່: 22136664, 22352225 ຊຶ່ງເປັນຜູ້ຊື້ດິນ ເອີ້ນວ່າ:(ຝ່າຍ ຂ.)

**ໄດ້ມອບເງິນງວດທີ່ 1 ຈຳນວນ** 500,000 Bath **(ຫ້າແສນບາດຖ້ວນ) ໃຫ້ກັບ:**

**ທ່ານ ນາງ ພິດສະໄໝ ຈັນທະວົງ - ທ້າວ ຄຳພອງ ຈັນທະວົງ** ປະຈຸບັນ ຢູ່ບ້ານ ຊຽງທອງ ເບີໂທ: 77776304, ປະຈຸບັນ ຢູ່ບ້ານ ຈູມຄ້ອງ ຢູ່ທີ່ ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ ຊຶ່ງຮ່ວມກັນເປັນຜູ້ຂາຍດິນ ເອີ້ນວ່າ:(ຝ່າຍ ກ.).

ຕາມສັນຍາຊື້-ຂາຍດິນທີ່ໄດ້ລົງລາຍເຊັນຮ່ວມກັນ ສະບັບເລກທີ່ .....03../..ສຄລ....

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານໂດຍຊ້ອງໜ້າອຳນາດການປົກຄອງບ້ານ ແລະ ພະຍານ.

| **ຜູ້ມອບເງິນ(ຝ່າຍຜູ້ຊື້)** | **ພະຍານ(ຝ່າຍຜູ້ຊື້)** | **ຜູ້ຮັບເງິນ(ຝ່າຍຜູ້ຂາຍ)** | **ພະຍານ(ຝ່າຍຜູ້ຂາຍ)** |
|---|---|---|---|
| (signature) ນ.ບຸນທັນ | (signatures) | | (signature) ນ.ພິດສະໄໝ |

**ທີ່ບ້ານ**...ສັງຄະໂລກ......., **ວັນທີ່** ...16../.01../.2012

**ເຊັນ ແລະ ປະທັບຕານາຍບ້ານ**

ນາຍບ້ານ ບ້ານ ຊັງຄະໂລກ ເມືອງ ຫຼວງພະບາງ

ຄຳພັນ ວົງສອນເພັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການຄຸ້ມຄອງທີ່ດິນແຫ່ງຊາດ
ກະຊວງການເງິນ

ກົມຄຸ້ມຄອງທີ່ດິນ ແລະ ເຮືອນ

ຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ

ລະຫັດ 06 001 0034

(ແຂວງ).ຫຼວງພະບາງ

(ເມືອງ) ຫຼວງພະບາງ

ບ້ານ ສັງຄະໂລກ

# ໃບຕາດິນ

ສະໝຸດຕາດິນເຫລັ້ມທີ 03

ໃບທີ 125 ເລກທີ 425

ອອກໃຫ້ແກ່ ນ.ພິດສະໄໝ ຈັນທະວົງ - ທ.ຄໍາຟອງ ຈັນທະວົງ

ວັນເດືອນປີເກີດ 1/11/1954 ສັນຊາດ ລາວ ອາຊີບ ຄ້າຂາຍ

ບ້ານຢູ່ປະຈຸບັນ ບ.ຈູມຄ້ອງ ໜ່ວຍ 01 (ເມືອງ) ຫຼວງພະບາງ

(ແຂວງ) ຫຼວງພະບາງ ຊື່ພໍ່ ທ.ຄໍາຜາຍ(ຕ) ຊື່ແມ່ ນ.ທອງສຸກ

ສາມີ ຫລື ພັນລະຍາ ສົມສົມສັງງ

ທີ່ຕັ້ງຂອງດິນ: ຖະໜົນ ທາງຮ່ອມ ໜ່ວຍ 12 ບ້ານ ສັງຄະໂລກ

ເນື້ອທີ່ຂອງດິນ ຮຕ 372 ຕາແມດ

**ມາດຕາສ່ວນ** 1/500 ແຜນທີ່ດິນໃບທີ C196-198/03 ເລກທີ 102

# ແຜນທີ່ດິນ




2008

ອອກໃຫ້ທີ່ ຫຼວງພະບາງ ວັນທີ ເດືອນ ປີ

ຫົວໜ້າພະແນກການເງິນ

ຫົວໜ້າອົງການຄຸ້ມຄອງທີ່ດິນແຂວງ/ກໍາແພງ

ຫົວໜ້າຫ້ອງການຄຸ້ມຄອງ
ທີ່ດິນ ແລະ ເຮືອນ

ສຸກັນ ບຸນຍົງ